ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 4734 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 11 NOV 2025

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 04/2025

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາ ບໍລິຫານສະໄໝສາມັນ ຄັ້ງທີ 04/2025, ວັນທີ 11 ພະຈິກ 2025, ມີລາຍລະອຽດລຸ່ມນີ້:

1. ອະນຸມັດປົດລາຍງານຜົນການດຳເນີນທຸລະກິດ ລວມທັງປົດລາຍງານການເງິນ ຂອງບໍລິສັດ ປະຈຳໄຕມາດ 03 ປີ 2025.
2. ອະນຸມັດ ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2026 ແລະ ໃຫ້ນຳເລື່ອງນີ້ລາຍງານຕໍ່ກອງ ປະຊຸມສາມັນຜູ້ຖືຮຸ້ນ ເພື່ອພິຈາລະນາຮັບຮອງຕາມລະບຽບການ.
3. ອະນຸມັດ ແຜນການຈັດກອງປະຊຸມ ຂອງສະພາບໍລິຫານ ປະຈຳປີ 2026 ດັ່ງນີ້:
   - ວັນທີ 13/02/2026 ປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 1/2026;
   - ວັນທີ 16/03/2026 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2026;
   - ວັນທີ 15/05/2026 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 2/2026;
   - ວັນທີ 19/08/2026 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2026;
   - ວັນທີ 11/11/2026 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 4/2026;

- ສຳລັບວັນ ແລະ ເວລາການຈັດກອງປະຊຸມສະພາບໍລິຫານ ອາດຈະມີການປ່ຽນແປງ ອີງຕາມສຽງອີງ ປະຊຸມ ½ ຂອງສະມາຊິກສະພາບໍລິຫານ ແລະ ກອງປະຊຸມສະພາບໍລິຫານສະໄໝວິສາມັນ ສາມາດຈັດ ຂຶ້ນໄດ້ຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະ ສຳຄັນຂອງວຽກງານຕົວຈິງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la